ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----=====000=====-----

ເລກທີ 062/ຄຄຊ

ຄະນະກຳມະການຄຸ້ມຄອງຫຼັກຊັບ

ນະຄອນຫຼວງວຽງຈັນ, ວັນທີ 07 SEP 2020

# ຂໍ້ຕົກລົງ
# ວ່າດ້ວຍ ການກຳນົດອັດຕາຄ່າທຳນຽມ ການຊື້ ຂາຍ ແລະ ການໂອນ ຮຸ້ນຈົດທະບຽນ ໃນຕະຫຼາດຫຼັກຊັບລາວ

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 79/ສພຊ, ລົງວັນທີ 03 ທັນວາ 2019;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການໂອນຮຸ້ນ ສະບັບເລກທີ 0025/ຄຄຊ, ລົງວັນທີ 26 ຕຸລາ 2016;
- ອີງຕາມ ລະບຽບວ່າດ້ວຍການຄຸ້ມຄອງການຊື້ ຂາຍຮຸ້ນ ທາງອິນເຕີເນັດ ຢູ່ ສປປ ລາວ ສະບັບເລກທີ 001/ຄຄຊ, ລົງວັນທີ 24 ກໍລະກົດ 2013;
- ອີງຕາມ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 21/ຄປຈ, ລົງວັນທີ 27 ມີນາ 2020.

## ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ:

**ມາດຕາ 1** ກຳນົດອັດຕາຄ່າທຳນຽມ ການຊື້ ຂາຍ ແລະ ການໂອນ ຮຸ້ນຈົດທະບຽນ ໃນຕະຫຼາດຫຼັກຊັບລາວ ຂອງແຕ່ລະພາກສ່ວນ ດັ່ງລຸ່ມນີ້:

1. ອັດຕາຄ່າທຳນຽມການຊື້ ຂາຍ ຮຸ້ນຈົດທະບຽນ

1.1. ອັດຕາຄ່າທຳນຽມການຊື້ ຂາຍ ຮຸ້ນຈົດທະບຽນ ແບບປົກກະຕິ

| ພາກສ່ວນທີ່ເກັບຄ່າທຳນຽມ | ອັດຕາຄ່າທຳນຽມ | | ລວມ |
|---|---|---|---|
| | ຊື້ | ຂາຍ | |
| ສຳນັກງານ ຄຄຊ | 0,04% | 0,04% | **0,08%** |
| ຕະຫຼາດຫຼັກຊັບລາວ | 0,15% | 0,15% | **0,30%** |
| ບໍລິສັດຫຼັກຊັບ (ສູງສຸດບໍ່ເກີນ) | 0,15% | 0,15% | **0,30%** |
| ກອງທຶນປ້ອງກັນຄວາມສ່ຽງ | 0,01% | 0,01% | **0,02%** |
| ລວມ | **0,35%** | **0,35%** | **0,70%** |



ຄະນະກຳມະການຄຸ້ມຄອງຫຼັກຊັບ, ບ້ານໂພນສະອາດ, ໜ່ວຍ 20, ເມືອງ ໄຊເຊດຖາ, ນະຄອນຫຼວງວຽງຈັນ
ຕູ້ໄປສະນີ 19 ໂທລະສານ : (856)-21-217806 ໂທລະສັບ : (856)-21-217770 E-mail : lsco@lsc.gov.la

1.2. ອັດຕາຄ່າທຳນຽມການຊື້ ຂາຍ ຮຸ້ນຈົດທະບຽນ ແບບຜ່ານທາງອິນເຕີເນັດ (HTS)

| ພາກສ່ວນທີ່ເກັບຄ່າທຳນຽມ | ອັດຕາຄ່າທຳນຽມ | | ລວມ |
|---|---|---|---|
| | ຊື້ | ຂາຍ | |
| ສຳນັກງານ ຄຄຊ | 0,036% | 0,036% | **0,072%** |
| ຕະຫຼາດຫຼັກຊັບລາວ | 0,135% | 0,135% | **0,270%** |
| ບໍລິສັດຫຼັກຊັບ (ສູງສຸດບໍ່ເກີນ) | 0,135% | 0,135% | **0,270%** |
| ກອງທຶນປ້ອງກັນຄວາມສ່ຽງ | 0,010% | 0,010% | **0,020%** |
| ລວມ | **0,316%** | **0,316%** | **0,632%** |

2. ອັດຕາຄ່າທຳນຽມການໂອນຮຸ້ນຈົດທະບຽນ

| ພາກສ່ວນທີ່ເກັບຄ່າທຳນຽມ | ຕາມສັນຍາ | ຕາມຄຳຕັດສິນ ຫຼື ພິພາກສາຂອງສານ | ຕາມການຮ້ອງຂໍ | ຕາມການສືບທອດມູນມໍລະດົກ ຫຼື ເສຍຊີວິດ |
|---|---|---|---|---|
| ສຳນັກງານ ຄຄຊ | 0,08% | 0,08% | 0,08% | 0,04% |
| ຕະຫຼາດຫຼັກຊັບລາວ | 0,30% | 0,30% | 0,30% | 0,15% |
| ບໍລິສັດຫຼັກຊັບ (ສູງສຸດບໍ່ເກີນ) | 0,30% | 0,30% | 0,30% | 0,15% |
| ກອງທຶນປ້ອງກັນຄວາມສ່ຽງ | 0,02% | 0,02% | 0,02% | 0,01% |
| ລວມ | **0,70%** | **0,70%** | **0,70%** | **0,35%** |

**ມາດຕາ 2** ສຳນັກງານ ຄຄຊ, ຕະຫຼາດຫຼັກຊັບລາວ, ບໍລິສັດຫຼັກຊັບ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

**ມາດຕາ 3** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ໃຊ້ປ່ຽນແທນ ຂໍ້ຕົກລົງວ່າດ້ວຍການກຳນົດອັດຕາຄ່າທຳນຽມ ການຊື້ ຂາຍ ແລະ ການໂອນຮຸ້ນຈົດທະບຽນ ໃນຕະຫຼາດຫຼັກຊັບລາວ ສະບັບເລກທີ 10/ຄຄຊ, ລົງວັນທີ 27 ເມສາ 2017.

ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ

ສົມດີ ດວງດີ



ຄະນະກຳມະການຄຸ້ມຄອງຫຼັກຊັບ, ບ້ານໂພນສະອາດ, ໜ່ວຍ 20, ເມືອງ ໄຊເຊດຖາ, ນະຄອນຫຼວງວຽງຈັນ
ຕູ້ໄປສະນີ 19 ໂທລະສານ : (856)-21-217806 ໂທລະສັບ : (856)-21-217770 E-mail : lsco@lsc.gov.la